The Global Fund

# ຂໍ້ແນະນຳສຳລັບຄະນະກຳມະການປະສານງານກອງທຶນໂລກ: ກ່ຽວກັບການມີສ່ວນຮ່ວມຂອງຄະນະກຳມະການ

ປັບປຸງ: ມິນາ 2020

## ຈຸດປະສົງ ແລະ ຜູ້ຊົມໃຊ້ຂໍ້ແນະນຳສະບັບນີ້

- ຂໍ້ແນະນຳສະບັບນີ້ສະໜັບສະໜູນຄະນະກຳມະການປະສານງານກອງທຶນໂລກ (CCMs[1]) ເພື່ອເສີມຂະຫຍາຍການເປັນຕົວແທນທີ່ມີຄຸນນະພາບ, ການມີສ່ວນຮ່ວມທີ່ມີຄວາມໝາຍ ແລະ ການມີສ່ວນຮ່ວມຈາກທຸກໆເຂດເລືອກຕັ້ງ[2] ໃນການອອກແບບ, ການນຳສົ່ງ, ການຕິດຕາມແລະບໍລິຫານຄຸ້ມຄອງວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ທີ່ໄດ້ຮັບທຶນສະໜັບສະໜູນຈາກກອງທຶນໂລກ.

## ນິຍາມກ່ຽວກັບການມີສ່ວນຮ່ວມ

- ບັນດາເຂດເລືອກຕັ້ງທັງໝົດ ແມ່ນມີຕົວແທນເຂົ້າຮ່ວມຢ່າງມີປະສິດທິຜົນໃນຂະບວນການບໍລິຫານຄຸ້ມຄອງເພື່ອຮັບປະກັນການລົງທຶນຂອງກອງທຶນໂລກໄດ້ຮັບການພັດທະນາ ແລະ ມີການກວດກາຢ່າງໂປ່ງໃສ. ພ້ອມດຽວກັນນີ້ ກໍ່ໄດ້ສົ່ງຜົນສູງສຸດຕໍ່ສາມພະຍາດ ແລະ ຍັງໄດ້ປະກອບສ່ວນເຂົ້າໃນລະບົບເສີມສ້າງວຽກງານສາທາລະນະສຸກແບບຍືດຍຸ່ນ ແລະ ຍືນຍົງ (RSSH). ການລົງທຶນດັ່ງກ່າວນີ້ ຍັງຈະຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ແຜນງານແຫ່ງຊາດ ແລະ ລະບົບສາທາລະນະສຸກໂດຍອີງໃສ່ຄວາມພະຍາຍາມຂອງກອງທຶນໂລກໃນການສ້າງຄວາມຍືນຍົງດ້ານຄວາມສາມາດ, ການປ່ຽນຖ່າຍ ແລະ ການສົມທົບທຶນຂອງລັດຖະບານ.

## ຫຼັກການຂອງການມີສ່ວນຮ່ວມຢ່າງມີປະສິດຕິພາບ

- **ການມີສ່ວນຮ່ວມຢ່າງຕັ້ງໜ້າຂອງບັນດາການນຳໃນລະດັບປະເທດ:** ຜູ້ນຳຈາກຂະແໜງການຕ່າງໆທີ່ຮັບຜິດຊອບການວາງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການສະໜັບສະໜູນທຶນເຂົ້າໃນວຽກງານສາທາລະນະສຸກ[3] ເຂົ້າຮ່ວມກອງປະຊຸມ CCM ເປັນປະຈຳ ແລະ ໄດ້ໃຫ້ການຊີ້ນຳດ້ານຍຸດທະສາດ ແລະ ການຕັດສິນໃຈທີ່ສຳຄັນຕ່າງໆເພື່ອເສີມຂະຫຍາຍການປະສານງານລະຫວ່າງການລົງທຶນທີ່ໄດ້ຮັບການສະໜັບສະໜູນຈາກກອງທຶນໂລກ, ແຜນງານແຫ່ງຊາດແລະແຫຼ່ງທຶນອື່ນໆ.
- **ສຽງຈາກຫຼາຍຂະແໜງການ:** ອົງປະກອບ CCM ສະທ້ອນໃຫ້ເຫັນເຖິງຂະໜາດທີ່ສາມາດຄຸ້ມຄອງໄດ້[4],

---

[1]ຈຸດປະສົງຂອງເອກະສານນີ້, CCM ລວມມີຄະນະກຳມະການປະສານງານພາກພື້ນ (RCMs) ຕາມທີ່ໄດ້ກຳນົດໄວ້ໃນນະໂຍບາຍ CCM

[2]ຄູ່ມືແນະນຳກ່ຽວກັບການເປັນຕົວແທນຜູ້ມີສິດປ່ອນບັດ CCM ໄດ້ກຳນົດໄວ້ໃນນະໂຍບາຍCCM

[3]ປະກອບມີການດູແລຮັກສາສຸຂະພາບຂັ້ນຕົ້ນແລະຫ້ອງທົດລອງ (ເຊັ່ນ: ຫົວໜ້າຫ້ອງການ,ຫົວໜ້າກົມບໍລິການສຸຂະພາບ, ຫົວໜ້າຫ້ອງທົດລອງ, ຫົວໜ້າກົມການຮັກສາສຸຂະພາບຂັ້ນຕົ້ນ, ຫົວໜ້າແຜນການ, ຫລືພາລະບົດບາດທີ່ຄ້າຍຄືກັນທີ່ເໝາະສົມກັບສະພາບການ)

[4]ອີງຕາມການພົບເຫັນຈາກໂຄງການທົດລອງຂອງCCM Evolution Pilot, ໃນຂະນະທີ່ສະພາບການມີຄວາມສຳຄັນໃນການກຳນົດຂອບເຂດສິດທີ່ສອດຄ່ອງກັບກົດໝາຍຂອງCCM, ລະຫວ່າງ 10 ຫາ 20 ຜູ້ເຂົ້າຮ່ວມຢ່າງຫ້າວຫັນທີ່ໄດ້ສະແດງໃຫ້ເຫັນເຖິງປະສິດທິຜົນສູງສຸດໃນການສົນທະນາແລະການຕັດສິນໃຈທີ່ເຂັ້ມແຂງ.

ທັກສະ / ຄວາມຊໍ່ານານທີ່ກ່ຽວຂ້ອງເຊິ່ງຈໍາເປັນສໍາລັບສາມພະຍາດ ແລະ ນອກເໜືອຈາກນັ້ນ ຍັງໄດ້ຂະຫຍາຍອອກໄປຕື່ມໃນເວລາຈໍາເປັນສຸກເສີນເຊັ່ນ: ການລະບາດຂອງ COVID-19 ລວມທັງຂົງເຂດວຽກງານອື່ນໆ ເຊັ່ນ: ຫ້ອງທົດລອງ, ການຈັດຊື້ ແລະ ການຄຸ້ມຄອງຕ່ອງໂສ້ການສະໜອງ. ສະພາບແວດລ້ອມທີ່ປອດໄພ ແລະ ອໍານວຍໃຫ້ແກ່ປະຊາກອນຫຼັກ ຫຼື ດ້ອຍໂອກາດເປັນສິ່ງສໍາຄັນໃນການມີສ່ວນຮ່ວມຢ່າງມີປະສິດຕິຜົນ.

- **ການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງເພື່ອການຕອບໂຕ້ທີ່ຍືນຍົງ:** ການມີສ່ວນຮ່ວມຢ່າງຫ້າວຫັນຈາກກະຊວງການເງິນຫຼືແຜນການ, ທະນາຄານພັດທະນາ, ຄູ່ຮ່ວມມືຫຼາຍຝ່າຍແລະສອງຝ່າຍ, ພາກເອກະຊົນ ແລະ ການຈັດຕັ້ງທາງສັງຄົມ (CSO)/ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGO).

## ແຮງຂັບເຄື່ອນຂອງການມີສ່ວນຮ່ວມທີ່ມີປະສິດຕິຜົນ




- **ການເປັນຕົວແທນ**ຈາກບັນດາເຂດເລືອກຕັ້ງຕ່າງໆທີ່ຫຼາກຫຼາຍ, ເຊິ່ງສະທ້ອນໃຫ້ເຫັນເຖິງສະພາບການລະບາດ ແລະ ສະພາບຄວາມເປັນຈິງຂອງຊຸມຊົນ, ປະສົບການ ແລະ ຄວາມຕ້ອງການທີ່ຈໍາເປັນ. ສໍາລັບສະມາຊິກ CCM ທີ່ມີທັກສະເໝາະສົມຈາກຂະແໜງການທີ່ກ່ຽວຂ້ອງຈະໄດ້ຮັບການສະເໜີຊື່ເຂົ້າເລືອກຕັ້ງໂດຍຜ່ານຂະບວນການແບບໂປ່ງໃສ.
- **ການກະກຽມ:** ບັນດາສະມາຊິກ CCM ໄດ້ຮັບຂໍ້ມູນທີ່ສໍາຄັນກ່ຽວກັບກອງປະຊຸມ CCM ລ່ວງໜ້າ (ຈາກກອງເລຂາ CCM) ແລະ ໃຊ້ເວລາຢ່າງເໝາະສົມເພື່ອກະກຽມເຂົ້າຮ່ວມປະຊຸມໂດຍການທົບທວນ ແລະ ເຂົ້າໃຈວາລະຕ່າງໆລ່ວງໜ້າ. ບັນດາສະມາຊິກກໍ່ໄດ້ປຶກສາຫາລືພາຍໃນເຂດເລືອກຕັ້ງຂອງຕົນເພື່ອໃຫ້ມີຄວາມຄິດເຫັນ (ເຊັ່ນ: ຂໍ້ມູນດ້ານປະລິມານ ຫຼື ຄຸນນະພາບ) ແລະ ການຈັດລໍາດັບວາລະກອງປະຊຸມ ແລະ ບັນຫາທີ່ພົ້ນເດັ່ນທີ່ຈະຕ້ອງເອົາໃຈໃສ່ໃນການບໍລິຫານຄຸ້ມຄອງ.
- **ການມີສ່ວນຮ່ວມ:** ນອກເໜືອຈາກການເຂົ້າຮ່ວມ (ທີ່ສາຄັນແມ່ນຕ້ອງບັນລຸອົງປະກອບກອງປະຊຸມເພື່ອກວດສອບຄວາມຖືກຕ້ອງ ແລະ ການຕັດສິນທີ່ຖືກຕ້ອງ), ການມີສ່ວນຮ່ວມຢ່າງຫ້າວຫັນໃນການສົນທະນາ ແລະ ເອົາໃຈໃສ່ຕໍ່ປະເດັນຕ່າງໆແມ່ນກຸນແຈທີ່ສໍາຄັນຂອງອົງກອນຄຸ້ມຄອງສຸຂະພາບທີ່ມີປະສິດຕິຜົນ. ຄວາມມຸ້ງໝັ້ນໃນການສະເໜີບຸລິມະສິດຂອງເຂດເລືອກຕັ້ງໂດຍການນໍາໃຊ້ຂໍ້ມູນທີ່ກ່ຽວຂ້ອງ - ດ້ານຄຸນນະພາບ, ດ້ານປະລິມານ ແລະ ໄດ້ສັງລວມມາຈາກຫຼາຍລະດັບລວມທັງຊຸມຊົນ.
- **ການສື່ສານ:** ຕະຫຼອດຂະບວນການ, ການສື່ສານແບບສອງທິດທາງແລະເປັນລະບົບ ແລະ ກະແສຂໍ້ມູນຂ່າວສານທີ່ມີປະສິດຕິພາບຂອງສະມາຊິກທີ່ຕິດພັນກັບເຂດເລືອກຕັ້ງຂອງຕົນແມ່ນກຸນແຈທີ່ສໍາຄັນ. ການສື່ສານ, ທັງໃນລະຫວ່າງການປະຊຸມ ແລະ ການພົບປະກັນ, ຄວນສົ່ງເສີມດ້ວຍຄວາມເຄົາລົບນັບຖື, ຍຶດຖືເອົາທັດສະນະໃນການຮຽກຮ້ອງຈາກສະມາຊິກທຸກຄົນ (ບໍ່ພຽງແຕ່ມີສຽງສ່ວນຫຼາຍເທົ່ານັ້ນ) ແລະ ຕ້ອງຍຶດຖືລັກສະນະທີ່ມີການແບ່ງຄວາມຮັບຜິດຊອບຮ່ວມກັນ ແລະ ດໍາເນີນການຮ່ວມກັນ.

## ພາກສ່ວນກ່ຽວຂ້ອງທີ່ສຳຄັນໃນການມີສ່ວນຮ່ວມ

### ຄະນະນຳຂອງ CCM

- ສົ່ງເສີມການຍຶດໝັ້ນໃນຫຼັກການການບໍລິຫານຄຸ້ມຄອງທີ່ດີ;
- ເປີດໃຈເພື່ອຮັບຟັງສຽງຂອງສະມາຊິກ CCM ທັງໝົດດ້ວຍຄວາມນັບຖືໂດຍສະເພາະແມ່ນຕົວແທນຈາກພາກສ່ວນຕ່າງໆ ເຊັ່ນ: ປະຊາກອນ ແລະ ຊຸມຊົນ ທີ່ໄດ້ຮັບຜົນກະທົບຫຼັກໂດຍການກະກຽມພື້ນທີ່ທີ່ສະດວກປອດໄພໃນການສະແດງຄຳຄິດເຫັນ;
- ສົ່ງເສີມການສົນທະນາໂດຍອີງໃສ່ຂໍ້ມູນເພື່ອເຮັດໃຫ້ການລົງທຶນຂອງກອງທຶນໂລກໄດ້ຮັບໝາກຜົນສູງສຸດ;
- ໄກ່ເກ່ຍລະຫວ່າງຜູ້ມີສ່ວນຮ່ວມຈາກຫຼາຍພາກສ່ວນໃນສະຖານະການທີ່ມີການຂັດແຍ້ງ;
- ສື່ສານໃຫ້ມີຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບບົດບາດ ແລະ ຄວາມຮັບຜິດຊອບຂອງສະມາຊິກ CCM.

### ກອງເລຂາ CCM

- ແຈກຢາຍເອກະສານໃຫ້ສະມາຊິກສົມບູນ ແລະ ສຳຮອງ CCM ທຸກໆຄົນໃຫ້ທັນເວລາເພື່ອການກະກຽມກອງປະຊຸມ ແລະ ການຕັດສິນໃຈໃຫ້ມີຄຸນນະພາບ ເຊັ່ນ: ວາລະກອງປະຊຸມ / ບົດບັນທຶກກອງປະຊຸມ, ເອກະສານທີ່ກ່ຽວຂ້ອງ (ກອງປະຊຸມໃຫຍ່, ຄະນະກຳມະການ, ທີມງານດ້ານວິຊາການ) ພ້ອມທັງກະຕຸກຊຸກຍູ້ໃຫ້ສະມາຊິກ CCM ເຂົ້າຮ່ວມກອງປະຊຸມ;
- ຕ້ອງຮັບປະກັນວ່າ ຂໍ້ມູນຈາກຊຸມຊົນທີ່ໜ້າເຊື່ອຖືແລະໄດ້ຮັບການຢັ້ງຢືນຈາກ CCM ໄດ້ຖືກນຳໄປສົນທະນາກັບຝ່າຍລັດຖະບານຂັ້ນສູງເພື່ອຂັບເຄື່ອນການຕອບໂຕ້ທີ່ມີປະສິດຕິຜົນຕໍ່ສາມພະຍາດນີ້;
- ເສີມຂະຫຍາຍການມີສ່ວນຮ່ວມຈາກພະນັກງານຂັ້ນສູງຂອງລັດຖະບານເພື່ອສົ່ງເສີມ CCM ໃນຂົງເຂດສຸຂະພາບແຫ່ງຊາດ.

### ສະມາຊິກ CCM

- ເຂົ້າຮ່ວມຢ່າງມີຄວາມໝາຍໃນຂະບວນການຕ່າງໆອີງຕາມຄວາມສາມາດ ແລະ ການສະໜັບສະໜູນຂອງຕົນ;
- ສົ່ງເສີມພຶດຕິກຳດ້ານຈັນຍາບັນ. ຍຶດໝັ້ນດ້ານຫຼັກການ ແລະ ຄວາມຄາດຫວັງຂອງກອງທຶນໂລກລວມທັງຫຼັກຈັນຍາບັນຂອງສະມາຊິກ CCM, ນະໂຍບາຍຂອງ CCM ແລະລະບຽບຫຼັກການໃນການບໍລິຫານຄຸ້ມຄອງ.

### ທີມງານຂອງກອງທຶນໂລກ (CT)

- ເຮັດວຽກຮ່ວມກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບກອງທຶນໂລກລວມທັງ CCMs ເພື່ອສົ່ງເສີມການມີສ່ວນຮ່ວມທີ່ມີຄວາມໝາຍ.

### ຂໍ້ຄວນພິຈາລະນາພິເສດຂອງສະມາຊິກCCMs ໃນສະພາບການທີ່ແຕກຕ່າງກັນ

- **ບົດສັງລວມຂໍ້ແນະນຳກ່ຽວກັບ COVID-19:** ຮັບປະກັນຄວາມຕໍ່ເນື່ອງຂອງຄວາມຮັບຜິດຊອບຫຼັກຂອງຄະນະກຳມະການປະສານງານ ເຊິ່ງປະກອບມີສະບັບ ພາສາອັງກິດ | ປອກຕຸຍການ | ແອສປາຍໂຍນ | ຝຣັ່ງ;
- **CCMs ກຳລັງກະກຽມການປ່ຽນຖ່າຍ ຫຼືການຫັນປ່ຽນຈາກການສະໜອງທຶນຂອງກອງທຶນໂລກ.** ອົງປະກອບຂອງ CCM ຄວນສະທ້ອນເຖິງການເປັນຕົວແທນຂອງສະມາຊິກທີ່ກ່ຽວຂ້ອງກັບການວາງແຜນການຫັນປ່ຽນ,

ຄວາມພະຍາຍາມເພື່ອສ້າງຄວາມເຂັ້ມແຂງໃນການກຽມພ້ອມປ່ຽນຖ່າຍ ແລະ ຈັດຕັ້ງປະຕິບັດ. ສະມາຊິກທີ່ກ່ຽວຂ້ອງຄວນມີສ່ວນຮ່ວມໃນການວາງແຜນ ແລະ ການຈັດຕັ້ງປະຕິບັດການປ່ຽນຖ່າຍ (ລວມທັງກະຊວງການເງິນຫຼືແຜນການ, ທະນາຄານພັດທະນາ, ພາກເອກະຊົນ, ການຈັດຕັ້ງທາງສັງຄົມແລະອື່ນໆ)[5];

- **ໃນສະພາບແວດລ້ອມການປະຕິບັດງານທີ່ມີຄວາມທ້າທາຍ (COE).** ໃນກໍລະນີສຸກເສີນທີ່ມີຄວາມສັບສົນ, CCM ຄວນມີຕົວແທນຂອງບັນດາພາກສ່ວນກ່ຽວຂ້ອງດ້ານສຸຂະພາບມະນຸດສະທຳ ແລະ / ຫຼື ຄະນະກຳມະການປະສານງານລວມທັງຜູ້ຕາງໜ້າຂອງຜູ້ທີ່ຖືກຍົກຍ້າຍພາຍໃນປະເທດ (IDP);
- **ຜູ້ລີ້ໄພ, ຜູ້ບໍ່ມີສັນຊາດ, ຫຼືປະຊາກອນເຄື່ອນຍ້າຍ.** ໃນບັນດາປະເທດທີ່ມີຜູ້ລີ້ໄພ, ຜູ້ບໍ່ມີສັນຊາດ, ຫຼືປະຊາກອນເຄື່ອນຍ້າຍ, CCM ຄວນມີຕົວແທນຂອງປະຊາກອນທີ່ມີຄວາມສ່ຽງນີ້ ຫຼື ອົງການທີ່ກ່ຽວຂ້ອງຂອງ UN / INGO ທີ່ສະໜັບສະໜູນດ້ານຜົນປະໂຫຍດ ແລະ ຊ່ວຍແກ້ໄຂບັນຫາໃຫ້ແກ່ພວກເຂົາ.

## ແນະນໍາວິທີການແລະເຄື່ອງມືໃນການຈັດຕັ້ງປະຕິບັດ

- ກ່ອງເຄື່ອງມືການມີສ່ວນຮ່ວມຂອງຊຸມຊົນ - ໄດ້ອອກແບບມາເພື່ອໃຫ້ການຈັດຕັ້ງທາງສັງຄົມ ແລະ ຊຸມຊົນນຳໃຊ້ເພື່ອໃຫ້ມີສ່ວນຮ່ວມຢ່າງມີຄວາມໝາຍໃນຂະບວນການຂອງກອງທຶນໂລກໃນລະດັບປະເທດ. ກ່ອງເຄື່ອງມືປະກອບມີເອກະສານສະໜັບສະໜູນເປັນຫຼາຍພາສາ;
- ເຊື່ອມຕໍ່: https://www.theglobalfund.org/en/country-coordinating-mechanism/evolution/engagement/

## ເອກະສານຄັດຕິດ

- ເອກະສານຄັດຕິດ 1 - ຂໍ້ແນະນາຂອງສະມາຊິກ CCM ເພື່ອການມີສ່ວນຮ່ວມທີ່ມີຄວາມໝາຍ;
- ເອກະສານຄັດຕິດ 2 - ການນຳໃຊ້ທຶນ CCM ຂອງການຈັດຕັ້ງທາງສັງຄົມ;
- ເອກະສານຄັດຕິດ 3 - ການມີສ່ວນຮ່ວມຂອງຄູ່ຮ່ວມງານກ່ຽວກັບ CCMs

[5] ຂໍ້ແນະນຳກ່ຽວກັບການຫັນປ່ຽນທີ່ມີຄວາມຍືນຍົງ, 15 ພຶດສະພາ 2020. https://www.theglobalfund.org/media/5648/core_sustainabilityandtransition_guidancenote_en.pdf ໜ້າ 11,16.